**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0874 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2025

# ຂໍ້ຕົກລົງ
# ວ່າດ້ວຍເຄື່ອງໝາຍການຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 15 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 452/ກຊປ, ລົງວັນທີ 25 ເມສາ 2025.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານເຄື່ອງໝາຍການຄ້າ ເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ ແລະ ການຄຸ້ມຄອງວຽກງານເຄື່ອງໝາຍການຄ້າ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນ, ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຫັນເປັນອຸດສາຫະກຳທີ່ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ເຄື່ອງໝາຍການຄ້າ

ເຄື່ອງໝາຍການຄ້າ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ນຳໃຊ້ກັບສິນຄ້າ ຫຼື ການບໍລິການ ເພື່ອຈຳແນກສິນຄ້າ ຫຼື ການບໍລິການຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ໃຫ້ແຕກຕ່າງຈາກສັນຍາລັກຂອງຄົນອື່ນ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ຄັດຄ້ານ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກບາງສ່ວນ ຫຼື ທັງໝົດ, ລຶບລ້າງ ແລະ ການສະເໜີອື່ນ ກ່ຽວກັບເຄື່ອງໝາຍການຄ້າ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

2. **ຄໍາຮ້ອງ** ໝາຍເຖິງ ສໍານວນເອກະສານການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ຄັດຄ້ານ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນໍາໃຊ້, ໂອນສິດ, ດັດແກ້, ຍົກເລີກ ບາງສ່ວນ ຫຼື ທັງໝົດ, ລຶບລ້າງ ແລະ ການສະ ເໜີອື່ນໆ ກ່ຽວກັບເຄື່ອງໝາຍການຄ້າ;

3. **ຜູ້ຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມທີ່ເປັນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ;

4. **ການຄັດຄ້ານ** ໝາຍເຖິງ ການຍື່ນຄໍາຮ້ອງຂໍຄັດຄ້ານໂດຍຜູ້ຄັດຄ້ານ ຕໍ່ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ;

5. **ຜູ້ຂໍຍົກເລີກ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ຍື່ນຄໍາຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ;

6. **ການຍົກເລີກ** ໝາຍເຖິງ ການຍື່ນຄໍາຮ້ອງຂໍຍົກເລີກ ການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ ໂດຍຜູ້ຍົກເລີກ ທີ່ຍື່ນຄໍາຮ້ອງຂໍຍົກເລີກການຈົດທະບຽນເຄື່ອງໝາຍການຄ້າ ບາງສ່ວນ ຫຼື ທັງໝົດ;

7. **ຜູ້ຂໍລຶບລ້າງ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມທີ່ເປັນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຄໍາຮ້ອງຂໍລຶບລ້າງການຈົດທະບຽນເຄື່ອງໝາຍການຄ້າທັງໝົດ;

8. **ການລຶບລ້າງ** ໝາຍເຖິງ ການຍື່ນຄໍາຮ້ອງໂດຍຜູ້ຂໍລຶບລ້າງ ຕໍ່ການຈົດທະບຽນເຄື່ອງໝາຍການຄ້າທັງໝົດ;

9. **ໝວດ** ໝາຍເຖິງ ການຈັດໝວດຂອງສາກົນ ກ່ຽວກັບສິນຄ້າ ແລະ ການບໍລິການ ຕາມສົນທິສັນຍານີສ (Nice Agreement) ສໍາລັບການຈົດທະບຽນເຄື່ອງໝາຍການຄ້າ;

10. **ການແຍກຄໍາຮ້ອງ** ໝາຍເຖິງ ການແຍກຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໜຶ່ງ ອອກເປັນສອງ ຫຼື ຫຼາຍສະບັບ ຕາມໝວດສິນຄ້າ ຫຼື ການບໍລິການ ໂດຍຜູ້ຮ້ອງຂໍ ຊຶ່ງແຕ່ລະຄໍາຮ້ອງທີ່ໄດ້ແຍກມານັ້ນ ຕ້ອງກ່ຽວຂ້ອງກັບເຄື່ອງໝາຍທີ່ຢູ່ໃນຄໍາຮ້ອງຕົ້ນສະບັບ;

11. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕາມກົດໝາຍຕໍ່ກັບເຄື່ອງໝາຍການຄ້າ ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;

12. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງຜູ້ຖືສິດ ຫຼື ເຈົ້າຂອງສິດ ໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ;

13. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດເຄື່ອງໝາຍທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດໍາເນີນການອື່ນນໍາພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

14. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນ ຫຼື ທະນາຍຄວາມທີ່ໄດ້ຮັບການມອບໝາຍຈາກເຈົ້າຂອງເຄື່ອງໝາຍ ທີ່ມີທີ່ຢູ່ ໃນ ສປປ ລາວ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງເຄື່ອງໝາຍຈາກຕ່າງປະເທດ ທີ່ບໍ່ມີທີ່ຢູ່ໃນ ສປປ ລາວ ໃນການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ດໍາເນີນການອື່ນ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;

15. **ວັນບູລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍໄດ້ຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຢູ່ຕ່າງປະເທດ, ຢູ່ທີ່ສໍານັກງານອື່ນທີ່ກ່ຽວຂ້ອງກັບວຽກງານຊັບສິນທາງປັນຍາ ຫຼື ຍື່ນຄໍາຮ້ອງດັ່ງກ່າວ ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານເຄື່ອງໝາຍການຄ້າ ຢູ່ ສປປ ລາວ.

# ໝວດທີ 2
# ການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 5 ປະເພດຂອງເຄື່ອງໝາຍ**

ເຄື່ອງໝາຍ ປະກອບມີ ສີ່ ປະເພດ ດັ່ງນີ້:

1. ເຄື່ອງໝາຍການຄ້າ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃຫ້ແຕກຕ່າງຈາກສັນຍາລັກຂອງຜູ້ອື່ນ. ສັນຍາລັກອາດຈະເປັນຄຳສັບ ລວມທັງຄຳສັບທີ່ເປັນລວດລາຍ, ລາຍເຊັນ, ຊື່ບຸກຄົນ, ແບບຕົວເລກ, ອົງປະກອບເປັນຮູບຮ່າງ, ຮູບຊົງ, ຮູບແຕ້ມ, ຮູບຖ່າຍ, ຮູບພາບ, ຮູບສາມມິຕິ, ຮູບທີ່ມີການເຄື່ອນເໜັງ ຫຼື ສິ່ງຫຸ້ມຫໍ່ຂອງສິນຄ້າ ແລະ ການລວມກັນ ຫຼື ປະສົມປະສານຂອງຫຼາຍສີ ເຊັ່ນດຽວກັບການລວມກັນຂອງສັນຍາລັກໃດໜຶ່ງນັ້ນ.

2. ເຄື່ອງໝາຍບໍລິການ ແມ່ນ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກການບໍລິການຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃຫ້ແຕກຕ່າງຈາກສັນຍາລັກຂອງຜູ້ອື່ນ ຊຶ່ງແມ່ນສັນຍາລັກເຊັ່ນດຽວກັນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

3. ເຄື່ອງໝາຍຮັບຮອງ ແມ່ນ ເຄື່ອງໝາຍທີ່ນິຕິບຸກຄົນ ຫຼື ການຈັດຕັ້ງສ້າງຂຶ້ນເພື່ອນຳໃຊ້ໃນການຮັບຮອງມາດຕະຖານ ຫຼື ມີຄຸນລັກສະນະສະເພາະທີ່ເປັນເງື່ອນໄຂ ໃນການຮັບຮອງສິນຄ້າ ຫຼື ການບໍລິການ. ເຄື່ອງໝາຍດັ່ງກ່າວ ຈະຖືກນຳໃຊ້ໂດຍບຸກຄົນທີສາມ ເພື່ອຊີ້ບອກເຖິງທີ່ມາ, ວັດຖຸດິບ, ວິທີການຜະລິດສິນຄ້າ, ວິທີການໃຫ້ການບໍລິການ ກ່ຽວກັບມາດຕະຖານດ້ານຄຸນນະພາບ, ຄວາມປອດໄພ, ຄວາມສະອາດ ແລະ ຖືກຜະລິດໂດຍບຸກຄົນທີ່ມີຄວາມຊ່ຽວຊານສະເພາະດ້ານໃດໜຶ່ງ.

4. ເຄື່ອງໝາຍລວມໝູ່ ແມ່ນ ເຄື່ອງໝາຍທີ່ຖືກຮັບຮອງໂດຍອົງການຈັດຕັ້ງລວມໝູ່ ເປັນຕົ້ນ ສະມາຄົມ, ສະຫະພັນ, ອົງການຈັດຕັ້ງທາງສັງຄົມອື່ນ, ສະຫະກອນ, ສະພາການຄ້າ ແລະ ອຸດສາຫະກຳ ແລະ ອົງການຈັດຕັ້ງລວມໝູ່ອື່ນ.

5. ເຄື່ອງໝາຍລວມໝູ່ ແມ່ນເຄື່ອງໝາຍການຄ້າ ທີ່ມີພຽງສະມາຊິກຂອງອົງການຈັດຕັ້ງລວມໝູ່ເທົ່ານັ້ນເປັນຜູ້ນຳໃຊ້ ເພື່ອຊີ້ບອກວ່າສິນຄ້າ ຫຼື ການບໍລິການຂອງຕົນ ແຕກຕ່າງຈາກສິນຄ້າ ຫຼື ການບໍລິການຂອງພາກສ່ວນອື່ນ.

**ມາດຕາ 6 ການກວດຄົ້ນເຄື່ອງໝາຍການຄ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສະເໜີກວດຄົ້ນເຄື່ອງໝາຍການຄ້າ ໃຫ້ຍື່ນຄຳຮ້ອງຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຊຶ່ງຕ້ອງລະບຸໝວດຂອງສິນຄ້າ ຫຼື ການບໍລິການ ພ້ອມທັງຈ່າຍຄ່າບໍລິການ.

ຫາກເຄື່ອງໝາຍການຄ້າທີ່ສະເໜີກວດຄົ້ນນັ້ນ ເປັນຄຳສັບພາສາຕ່າງປະເທດ ແລະ/ຫຼື ຮູບແຕ້ມ, ຮູບພາບ, ຮູບຖ່າຍເຄື່ອງໝາຍ, ຜູ້ຍື່ນຄຳຮ້ອງ ຕ້ອງລະບຸຄຳອະທິບາຍ ແລະ ການອ່ານອອກສຽງເປັນພາສາລາວ, ພ້ອມທັງສະໜອງຕົວຢ່າງເຄື່ອງໝາຍ ທີ່ຈະແຈ້ງ ແລະ ຊັດເຈນບໍ່ວ່າຈະເປັນແບບເຈ້ຍ ຫຼື ເອເລັກໂຕຣນິກ ຄັດຕິດມາພ້ອມ.

ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດຄົ້ນເຄື່ອງໝາຍການຄ້າ ໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ເພື່ອໃຫ້ຮູ້ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ແລະ ແຈ້ງຜົນການກວດຄົ້ນ ພາຍໃນ ສິບ ວັນລັດຖະການ ນັບຈາກວັນທີໄດ້ຮັບຄຳຮ້ອງ ໄດ້ຮັບການຈົດທະບຽນແລ້ວ ຫຼື ຍັງບໍ່ທັນໄດ້ຈົດທະບຽນເຄື່ອງໝາຍການຄ້າ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດກວດຄົ້ນເຄື່ອງໝາຍດ້ວຍຕົນເອງ ໄດ້ທີ່ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ ຂອງກົມຊັບສິນທາງປັນຍາ.

ຜົນຂອງການກວດຄົ້ນເຄື່ອງໝາຍການຄ້າ ບໍ່ສາມາດນຳໃຊ້ເພື່ອຢັ້ງຢືນ ຫຼື ເປັນຫຼັກຖານໃນທາງກົດໝາຍເປັນພຽງແຕ່ການກວດຄົ້ນຂໍ້ມູນ ກ່ຽວກັບເຄື່ອງໝາຍການຄ້າ ເບື້ອງຕົ້ນເທົ່ານັ້ນ.

**ມາດຕາ 7 ເອກະສານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ການຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດຕົ້ນສະບັບ ຫຼື ສຳເນົາ;
3. ຮູບແຕ້ມ, ຮູບຖ່າຍ, ຮູບພາບ ຫຼື ຕົວຢ່າງເຄື່ອງໝາຍທີ່ຈະແຈ້ງ;
4. ລະບຸໝວດ ແລະ ລາຍການ ສິນຄ້າ ຫຼື ການບໍລິການທີ່ຈະນຳໃຊ້ເຄື່ອງໝາຍດັ່ງກ່າວ. ກໍລະນີ ຄຳຮ້ອງເປັນເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ໃຫ້ລະບຸເຄື່ອງໝາຍດັ່ງກ່າວໃສ່ໃນຄຳຮ້ອງ ພ້ອມທັງມີບົດອະທິບາຍ ກ່ຽວກັບການນຳໃຊ້, ຈຸດປະສົງ ແລະ ການຄຸ້ມຄອງເຄື່ອງໝາຍດັ່ງກ່າວ;
5. ສຳເນົາ ຫຼື ເອກະສານຢັ້ງຢືນວັນບູລິມະສິດ (ຖ້າມີ);
6. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ສຳລັບສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ແລະ ເອກະສານຄັດຕິດອື່ນ ທີ່ຍື່ນເປັນພາສາອັງກິດຕ້ອງແປເປັນພາສາລາວ ຍົກເວັ້ນ ຊື່, ທີ່ຢູ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄຳສັບທາງດ້ານວິຊາການ ໂດຍສອດຄ່ອງຕາມມາດຕາ 37 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນ ເກົ້າສິບວັນ ຫຼັງຈາກທີ່ໄດ້ຍື່ນຄຳຮ້ອງ, ຊຶ່ງຕ້ອງໄດ້ຮັບການຢັ້ງຢືນຈາກບໍລິສັດແປພາສາ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ ແລະ ຕ້ອງສະໜອງເອກະສານການແປໃນຮູບແບບເອເລັກໂຕຣນິກ ໃຫ້ແກ່ກົມຊັບສິນທາງປັນຍາ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄຳຮ້ອງຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

**ມາດຕາ 8 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ຜູ້ຮ້ອງຂໍ ສາມາດຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ຄຳສະເໜີຂໍຕໍ່ເວລາ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຕາມແບບພິມຂອງກົມຊັບສິນທາງປັນຍາ ໂດຍປະຕິບັດຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບຄຳຮ້ອງ, ໃຫ້ເລກທີ ແລະ ວັນທີຍື່ນຄຳຮ້ອງ, ອອກໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ;
2. ນຳສົ່ງເອກະສານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ໃຫ້ກົມຊັບສິນທາງປັນຍາ ເພື່ອດຳເນີນການຕາມຂັ້ນຕອນຕໍ່ໄປ;
3. ກໍລະນີ ຜູ້ຮ້ອງຂໍຈົດທະບຽນ ຫາກມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຈ່າຍໄປແລ້ວ;
4. ກໍລະນີ ວັນສຸດທ້າຍຂອງວັນບູລິມະສິດ ເປັນວັນພັກທາງລັດຖະການ ຫຼື ເປັນວັນທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄຳຮ້ອງ, ພະແນກຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງວັນລັດຖະການທຳອິດຖັດໄປ. ກໍລະນີ ຄຳຮ້ອງຂໍຈົດທະບຽນ ໄດ້ລະບຸວັນບູລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຊຶ່ງມີໄລຍະເວລາຂໍຮັບວັນບູລິມະສິດສຳລັບເຄື່ອງໝາຍການຄ້າ ໃນກຳນົດເວລາ ຫົກ ເດືອນ ນັບແຕ່ວັນທີ່ໄດ້ຮັບວັນບູລິມະສິດເປັນຕົ້ນໄປ.

**ມາດຕາ 9 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະໜອງເອກະສານຕາມເງື່ອນໄຂຕໍ່າສຸດ ທີ່ໄດ້ກຳນົດໄວ້ໃນຂໍ້ 1, 3 ແລະ 6 ຂອງມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ພ້ອມທັງການລະບຸໝວດ ສິນຄ້າ ຫຼື ບໍລິການ, ລາຍການສິນຄ້າ ຫຼື ການບໍລິການ ທີ່ຂໍການປົກປ້ອງພາຍໃຕ້ເຄື່ອງໝາຍການຄ້າໃຫ້ຖືກຕ້ອງຕາມການຈັດໝວດສາກົນ ໂດຍຄ່າທຳນຽມໃຫ້ເກັບເປັນແຕ່ລະໝວດ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະໜອງເອກະສານເພີ່ມເຕີມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ໃຫ້ຄົບຖ້ວນ ພາຍໃນ ຫົກສິບ ວັນນັບແຕ່ວັນອອກແຈ້ງການເປັນຕົ້ນໄປ, ຖ້າ ຫາກບໍ່ສະໜອງຕາມກໍານົດເວລາດັ່ງກ່າວຖືວ່າຄໍາຮ້ອງດັ່ງກ່າວ ຖືກສະຫຼະສິດ.

## ມາດຕາ 10 ເງື່ອນໄຂຂອງຕົວຢ່າງເຄື່ອງໝາຍ

ເຄື່ອງໝາຍທີ່ເປັນ ຮູບແຕ້ມ, ຮູບຖ່າຍ, ຮູບພາບ, ຮູບສາມມິຕິ ຫຼື ເຄື່ອງໝາຍທີ່ມີການເຄື່ອນເໜັງ (Motion Mark) ຕ້ອງເຮັດໃນຮູບແບບເອເລັກໂຕຣນິກ ຫຼື ໃນຮູບແບບເຈ້ຍທີ່ມີຄຸນນະພາບ (ບໍ່ເຫຼື້ອມ), ມີ ຄວາມລະອຽດ, ຈະແຈ້ງ ແລະ ຊັດເຈນ ໂດຍສະແດງພຽງແຕ່ເຄື່ອງໝາຍເທົ່ານັ້ນ ແລະ ຕ້ອງບໍ່ມີອົງປະກອບ ອື່ນ ທີ່ບໍ່ແມ່ນສ່ວນປະກອບຂອງເຄື່ອງໝາຍທີ່ຂໍຈົດທະບຽນ ເປັນເຄື່ອງໝາຍການຄ້າ ເຊັ່ນ ຂໍ້ມູນກ່ຽວກັບ ສິນຄ້າ, ແຫຼ່ງທີ່ມາຂອງສິນຄ້າ, ເຄື່ອງໝາຍຢັ້ງຢືນ ແລະ ຮັບຮອງ ເປັນຕົ້ນ ອາຫານ ແລະ ຢາ, ມາດຕະຖານ ແຫ່ງຊາດລາວ, ມາດຕະຖານສາກົນ ISO ທີ່ມີຢູ່ໃນສະຫຼາກຂອງສິນຄ້າ.

ເຄື່ອງໝາຍທີ່ເປັນຕົວໜັງສືມາດຕະຖານ ຕ້ອງລະບຸຊື່ຂອງຮູບແບບຕົວໜັງສື (Font) ແລະ ຂະໜາດ ຕົວໜັງສື (Font size) ທີ່ນໍາໃຊ້ເປັນເຄື່ອງໝາຍ ຢູ່ລະຫວ່າງ 15-30 pt.

ເຄື່ອງໝາຍ ທີ່ເປັນຄໍາສັບ ຕ້ອງຄັດຕິດຄໍາອະທິບາຍ ແລະ ການອ່ານອອກສຽງເປັນພາສາລາວ ມາພ້ອມ.

ກໍລະນີ ເຄື່ອງໝາຍ ທີ່ເປັນຄໍາສັບຕ່າງປະເທດ ຕ້ອງໄດ້ແປຄວາມໝາຍຈະແຈ້ງ ແລະ ອ່ານອອກສຽງ ເປັນພາສາລາວ ໃຫ້ຖືກຕ້ອງມາພ້ອມ.

ເຄື່ອງໝາຍ ທີ່ມີສີ ຫຼື ຫຼາຍສີລວມກັນ ຊຶ່ງປະກອບເປັນລັກສະນະຕົ້ນຕໍຂອງເຄື່ອງໝາຍ ຕ້ອງລະບຸສີຢ່າງ ຊັດເຈນ ຫຼື ລະບຸລະຫັດຂອງສີ.

ເຄື່ອງໝາຍ ທີ່ເປັນສາມມິຕິ ຕ້ອງລະບຸໃຫ້ເຫັນແຕ່ລະມິຕິ.

ເຄື່ອງໝາຍ ທີ່ມີການເຄື່ອນເໜັງ (Motion Mark) ຕ້ອງອະທິບາຍຄວາມໝາຍຂອງເຄື່ອງໝາຍ ດັ່ງກ່າວ ແລະ ສະໜອງສໍາເນົາຕົວຢ່າງຂອງເຄື່ອງໝາຍນັ້ນ ທີ່ສະແດງໃຫ້ເຫັນລາຍລະອຽດຂອງທຸກການເຄື່ອນ ເໜັງ ແລະ ສິ່ງເປັນຮູບແບບເອເລັກໂຕຣນິກໄຟ ໃນເວລາຍື່ນຄໍາຮ້ອງ.

## ມາດຕາ 11 ການລະບຸລາຍການສິນຄ້າ ຫຼື ການບໍລິການ

ຜູ້ຍື່ນຄໍາຮ້ອງ ສາມາດລະບຸລາຍການສິນຄ້າ ຫຼື ການບໍລິການ ຕາມການຈັດໝວດສາກົນ (Nice Classification) ທີ່ຜູ້ຮ້ອງຂໍນໍາໃຊ້ກັບເຄື່ອງໝາຍ ແລະ ຈັດໝວດຕາມລາຍການສິນຄ້າ ຫຼື ບໍລິການ ຕາມທີ່ ໄດ້ກໍານົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 12 ໝວດຂອງລາຍການ ສິນຄ້າ ແລະ ບໍລິການ

ໝວດຂອງລາຍການ ສິນຄ້າ ແລະ ບໍລິການ, ຕ້ອງລະບຸຕາມການຈັດໝວດສາກົນ (Nice Classification) ຊຶ່ງການຈັດໝວດສາກົນ ມີການປ່ຽນແປງເປັນແຕ່ລະໄລຍະ.

ຫາກການຈັດໝວດສາກົນ ມີການປ່ຽນແປງໃນລະຫວ່າງການດໍາເນີນການພິຈາລະນາຄໍາຮ້ອງ, ກົມ ຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຊາບ ເພື່ອດັດແກ້ຄໍາຮ້ອງໃນການລະບຸໝວດໃຫ້ຖືກຕ້ອງ, ຖ້າການຈັດ ໝວດສາກົນ ມີການປ່ຽນແປງ ຊຶ່ງເຮັດໃຫ້ຄໍາຮ້ອງມີໝວດເພີ່ມຂຶ້ນ ຈະບໍ່ໄດ້ໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝ າຍການຄ້າ ຈ່າຍຄ່າທໍານຽມສໍາລັບໝວດທີ່ເພີ່ມຂຶ້ນ, ແຕ່ຕ້ອງຈ່າຍຄ່າທໍານຽມແຕ່ລະໝວດສິນຄ້າ ຫຼື ບໍລິການ ນັ້ນ ໃນເວລາຕໍ່ອາຍຸການປົກປ້ອງເຄື່ອງໝາຍດັ່ງກ່າວ.

## ມາດຕາ 13 ເງື່ອນໄຂການໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ

ເຄື່ອງໝາຍ ທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ສໍາລັບເຄື່ອງໝາຍ ທີ່ບໍ່ສາມາດຈົດທະບຽນເຄື່ອງໝາຍການຄ້າ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 23 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 14 ຫຼັກການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ການພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃຫ້ປະຕິບັດຕາມຫຼັກການ ທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ກໍລະນີ ການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼາຍສະບັບ ພາຍໃນໄລຍະດຽວກັນ ທີ່ເປັນເຄື່ອງໝາຍດຽວກັນ ຫຼື ຄ້າຍຄືກັນ, ຖ້າຫາກສິນຄ້າດຽວກັນ ຫຼື ຄ້າຍຄືກັນນັ້ນ ໃຫ້ພິຈາລະນາຄຳຮ້ອງທີ່ມີອັນບຸລິມະສິດກ່ອນ.

ກໍລະນີ ກົມຊັບສິນທາງປັນຍາ ໄດ້ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງແລ້ວ ໃຫ້ຈົດທະບຽນເຄື່ອງໝາຍການຄ້າ ຂອງຄຳຮ້ອງທີ່ໄດ້ຮັບອັນບຸລິມະສິກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດ ຕໍ່ຄຳຮ້ອງທີ່ໄດ້ຮັບອັນບຸລິມະສິດຕາມຫຼັງ.

ຫາກການພິຈາລະນາຄຳຮ້ອງທີ່ໄດ້ຮັບອັນບຸລິມະສິດຕາມຫຼັງນັ້ນ ສຳເລັດກ່ອນ ແລະ ຄຳຮ້ອງດັ່ງກ່າວ ມີເງື່ອນໄຂໃນການໄດ້ຮັບການຈົດທະບຽນເຄື່ອງໝາຍການຄ້າ, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄຳຮ້ອງໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ໄດ້ຮັບອັນບຸລິມະສິດກ່ອນນັ້ນສິ້ນສຸດລົງ.

ກໍລະນີ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ມີເຄື່ອງໝາຍຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ, ຄຳຮ້ອງດັ່ງກ່າວ ມີສິດໄດ້ຮັບການພິຈາລະນາ ແຕ່ຕ້ອງມີອັນບຸລິມະສິດມາກ່ອນເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ ທີ່ໄດ້ຮັບການຈົດທະບຽນ ຢູ່ ສປປ ລາວ ຫຼື ປະເທດໃດໜຶ່ງແລ້ວ. ຜູ້ກວດສອບ ຈະບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍ ແລະ ບໍ່ໃຫ້ຄຳແນະນຳ ກ່ຽວກັບຄວາມເປັນໄປໄດ້ຂອງເຄື່ອງໝາຍການຄ້ານັ້ນສອດຄ່ອງຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 15 ການກວດສອບເບື້ອງຕົ້ນ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າແລ້ວ ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຖືກຕ້ອງ ແລະ ຄວາມສອດຄ່ອງຂອງເອກະສານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5, 7, 8, 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້, ການກວດສອບເບື້ອງຕົ້ນ ຕ້ອງໃຫ້ສຳເລັດພາຍໃນ ຫົກສິບ ວັນນັບແຕ່ວັນຮັບເອກະສານຄຳຮ້ອງຄົບຖ້ວນເປັນຕົ້ນໄປ.

ສຳລັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຍັງຕ້ອງໄດ້ກວດສອບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ທີ 3 ແລະ 4 ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້.

ກໍລະນີ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອແຈ້ງຕໍ່ໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຊາບ ພາຍໃນ ສາມ ວັນລັດຖະການ, ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະໜອງເອກະສານ ຫຼື ດັດແກ້ ໃຫ້ຖືກຕ້ອງຕາມເງື່ອນໄຂ ພາຍໃນ ສິບ ວັນລັດຖະການນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ບໍ່ສາມາດປະຕິບັດພາຍໃນກຳນົດເວລາ, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອແຈ້ງຕອບເປັນລາຍລັກອັກສອນໃຫ້ຜູ້ຍື່ນຄຳຮ້ອງຊາບວ່າຄຳຮ້ອງບໍ່ໄດ້ຮັບການພິຈາລະນາ ຫຼື ຖືກສະຫຼະສິດ.

ກໍລະນີ ເອກະສານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

ການດັດແກ້ຕົວຢ່າງຂອງເຄື່ອງໝາຍການຄ້າ ຕ້ອງບໍ່ໃຫ້ເກີດມີການປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍການຄ້ານັ້ນ.

**ມາດຕາ 16 ການເຜີຍແຜ່ຄຳຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ພາຍຫຼັງທີ່ກົມຊັບສິນທາງປັນຍາ ໄດ້ດຳເນີນການກວດສອບເບື້ອງຕົ້ນ ເອກະສານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສຳເລັດແລ້ວ, ຕ້ອງເຜີຍແຜ່ຄຳຮ້ອງລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ພາຍໃນ ສິບຫ້າ ວັນ, ການເຜີຍແຜ່ເອກະສານຄຳຮ້ອງ ຕ້ອງປະກອບມີຂໍ້ມູນ ດັ່ງນີ້:

1. ເຄື່ອງໝາຍ;
2. ໝວດສິນຄ້າ ແລະ/ຫຼື ການບໍລິການ;
3. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
4. ຊື່ ແລະ ທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ;
5. ການບໍ່ຂໍຖືສິດແຕ່ພຽງຜູ້ດຽວ ໃນອົງປະກອບໃດໜຶ່ງຂອງເຄື່ອງໝາຍ (ຖ້າມີ).

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ,ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນ ຫົກສິບ ວັນນັບ ແຕ່ວັນທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ໂດຍປະກອບເອກະສານຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງສົ່ງຄຳສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃຫ້ກົມຊັບສິນທາງປັນຍາ ເພື່ອພິຈາລະນາຕາມຂັ້ນຕອນຕໍ່ໄປ.

**ມາດຕາ 17 ການກວດສອບເນື້ອໃນ**

ພາຍຫຼັງກວດສອບເບື້ອງຕົ້ນສຳເລັດແລ້ວ ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເນື້ອໃນ ໂດຍອີງຕາມລະບົບຖານຂໍ້ມູນຊັບສິນທາງປັນຍາຂອງກົມ ແລະ ສາກົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການໃຫ້ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຊາບ ກ່ຽວກັບການປະຕິເສດເບື້ອງຕົ້ນການຈົດທະບຽນເຄື່ອງໝາຍການຄ້າ ຖ້າຫາກເຫັນວ່າເອກະສານຄຳຮ້ອງບໍ່ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ໂດຍແຈ້ງຜ່ານທາງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງໄດ້ສະໜອງເອກະສານ, ຂໍ້ມູນ, ຫຼັກຖານ ຫຼື ຄຳຊີ້ແຈງ ຫຼື ຄຳໂຕ້ແຍ້ງ ໃຫ້ກົມຊັບສິນທາງປັນຍາ ໂດຍຜ່ານທາງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ພາຍໃນ ຫົກສິບ ວັນ ນັບແຕ່ວັນອອກແຈ້ງການປະຕິເສດເບື້ອງຕົ້ນ, ຖ້າຫາກກາຍກຳນົດເວລາດັ່ງກ່າວ ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ມີເຫດຜົນພຽງພໍ ແລະ ແຈ້ງຕອບມາເປັນລາຍລັກອັກສອນ, ກົມຊັບສິນທາງປັນຍາ ກໍ່ສາມາດຕໍ່ເວລາໃຫ້ຕື່ມອີກ ສາມສິບ ວັນນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ; ຖ້າບໍ່ປະຕິບັດຕາມໄລຍະເວລາທີ່ກຳນົດ, ໃຫ້ຖືວ່າຄຳຮ້ອງຖືກສະຫຼະສິດ ພ້ອມທັງໃຫ້ກົມຊັບສິນທາງປັນຍາ ອອກແຈ້ງປະຕິເສດຄັ້ງສຸດທ້າຍ ພາຍໃນ ເຈັດ ວັນທາງລັດຖະການ.

ການກວດສອບເນື້ອໃນ ຕ້ອງໃຫ້ສຳເລັດພາຍໃນ ເກົ້າສິບ ວັນນັບ ແຕ່ວັນສິ້ນສຸດການພິມເຜີຍແຜ່ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໂດຍບໍ່ມີການສະເໜີຄັດຄ້ານ.

**ມາດຕາ 18 ການບໍ່ອະນຸຍາດໃຫ້ຖືສິດແຕ່ພຽງຜູ້ດຽວໃນອົງປະກອບໃດໜຶ່ງຂອງເຄື່ອງໝາຍ (Disclaimer)**

ກົມຊັບສິນທາງປັນຍາ ຕ້ອງບໍ່ອະນຸຍາດໃຫ້ຖືສິດແຕ່ພຽງຜູ້ດຽວຕໍ່ອົງປະກອບ ຫຼື ຄຳສັບໃດໜຶ່ງຂອງເຄື່ອງໝາຍ ເຊັ່ນ: ຄຳອະທິບາຍ ຫຼື ຄຳເວົ້າທົ່ວໄປ, ການຊີ້ບອກຄຸນນະພາບ, ຄຸນລັກສະນະຂອງສິນຄ້າ ຫຼື ການບໍລິການ ແລະ ຕ້ອງແຈ້ງປະຕິເສດເບື້ອງຕົ້ນເຖິງຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຊີ້ແຈງວ່າຕົນຈະບໍ່ຂໍຖືສິດແຕ່ພຽງຜູ້ດຽວ ຕໍ່ອົງປະກອບ ຫຼື ຄໍາສັບໃດໜຶ່ງຂອງເຄື່ອງໝາຍ ທີ່ບໍ່ເປັນອົງປະກອບຫຼັກຂອງເຄື່ອງໝາຍ ຕໍ່ກົມຊັບສິນທາງປັນຍາ ພາຍໃນ ຫົກສິບ ວັນນັບແຕ່ວັນອອກແຈ້ງປະຕິເສດເບື້ອງຕົ້ນ.

### ມາດຕາ 19 ການແຍກຄໍາຮ້ອງ

ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໃດໜຶ່ງ ສາມາດແຍກອອກເປັນສອງສະບັບ ຫຼື ຫຼາຍສະບັບໄດ້ ແຕ່ຕ້ອງດໍາເນີນກ່ອນໜ້າການຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ສິ້ນສຸດການພິຈາລະນາອື່ນຂອງຄໍາຮ້ອງດັ່ງກ່າວ, ການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ຖືກແຍກອອກມານັ້ນ ຕ້ອງອ້າງອີງໃສ່ຄໍາຮ້ອງສະບັບເດີມ ທີ່ຍື່ນໃນເບື້ອງຕົ້ນ ແລະ ລະບຸວ່າຄໍາຮ້ອງທີ່ຍື່ນມາໃໝ່ນັ້ນ ໄດ້ແຍກອອກມາຈາກຄໍາຮ້ອງສະບັບເດີມ ໂດຍກໍານົດເລກທີ ແລະ ວັນທີ ຍື່ນຄໍາຮ້ອງສະບັບເດີມ ໃສ່ຄໍາຮ້ອງທີ່ຍື່ນມາໃໝ່ແຕ່ລະສະບັບ.

ສໍາລັບຄໍາຮ້ອງສະບັບເດີມນັ້ນ ຕ້ອງມີການດັດແກ້ ໂດຍຮັກສາໄວ້ພຽງແຕ່ລາຍການ ຫຼື ໝວດສິນຄ້າ ຫຼື ໝວດການບໍລິການທີ່ຍັງເຫຼືອ. ຄໍາຮ້ອງທີ່ແຍກອອກມານັ້ນ ຕ້ອງຍື່ນພ້ອມກັບຄໍາຮ້ອງສະບັບເດີມ ທີ່ຖືກດັດແກ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

ຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ມີສິດໄດ້ຮັບວັນທີຍື່ນຄໍາຮ້ອງຕາມຄໍາຮ້ອງສະບັບເດີມ ຊຶ່ງຄໍາຮ້ອງທີ່ຖືກແຍກອອກມາແຕ່ລະສະບັບ ຕ້ອງໄດ້ຈ່າຍຄ່າທໍານຽມ ແລະ ຄ່າບໍລິການ.

### ມາດຕາ 20 ການດັດແກ້ປະເພດເຄື່ອງໝາຍ

ເຄື່ອງໝາຍປະເພດໃດໜຶ່ງ ທີ່ໄດ້ລະບຸໄວ້ໃນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ໄດ້ຍື່ນໃນເບື້ອງຕົ້ນ ສາມາດດັດແກ້ມາເປັນເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ໄດ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້.

ຖ້າຫາກເຄື່ອງໝາຍດັ່ງກ່າວ ຖືກດັດແກ້ມາເປັນເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່, ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງຍື່ນຄໍາຮ້ອງຄືນໃໝ່ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ.

### ມາດຕາ 21 ການດັດແກ້ຄໍາຮ້ອງ

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດສະເໜີດັດແກ້ຄໍາຮ້ອງໄດ້, ແຕ່ຕ້ອງດໍາເນີນການກ່ອນໜ້າການຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນຂອງຄໍາຮ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ກໍລະນີ ບໍ່ເພີ່ມໝວດສິນຄ້າ, ການບໍລິການ ຫຼື ມີການປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍ ຢູ່ໃນສໍານວນຄໍາຮ້ອງ.

### ມາດຕາ 22 ການເພີ່ມໝວດສິນຄ້າ ຫຼື ການບໍລິການ

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕ້ອງສະເໜີຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ຕາມແບບພິມຂອງກົມຊັບສິນທາງປັນຍາ ໂດຍລະບຸໝວດ ແລະ ລາຍລະອຽດຂອງລາຍການສິນຄ້າ ຫຼື ການບໍລິການ ທີ່ຕ້ອງການເພີ່ມຕື່ມນັ້ນ ພ້ອມທັງຈ່າຍຄ່າທໍານຽມ ເປັນແຕ່ລະໝວດສິນຄ້າ ຫຼື ການບໍລິການ ຢູ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ,ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ. ກໍລະນີ ຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຍັງຢູ່ໃນໄລຍະການກວດສອບເບື້ອງຕົ້ນ ພາຍໃນກໍານົດເວລາ ຫົກສິບ ວັນ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສະເໜີເພີ່ມໝວດສິນຄ້າ ຫຼື ການບໍລິການ ພາຍຫຼັງວັນທີໄດ້ເຜີຍແຜ່ຄໍາຮ້ອງ ແລະ ກ່ອນການຈົດທະບຽນ ໃຫ້ຍື່ນຄໍາສະເໜີຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ຕາມແບບພິມຂອງກົມຊັບສິນທາງປັນຍາ ໂດຍລະບຸໝວດ ແລະ ລາຍລະອຽດຂອງລາຍການສິນຄ້າ ຫຼື ການ

ບໍລິການ ທີ່ຕ້ອງການເພີ່ມຕື່ມນັ້ນ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງທີ່ມີການເພີ່ມໝວດສິນຄ້າ ຫຼື ການບໍລິການຄືນໃໝ່.

ກໍລະນີ ການຂໍເພີ່ມໝວດສິນຄ້າ ຫຼື ການບໍລິການ ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າ, ຜູ້ສະເໜີຕ້ອງໄດ້ຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຄືນໃໝ່ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.

**ມາດຕາ 23 ການຈົດທະບຽນເຄື່ອງໝາຍການຄ້າ**

ການຈົດທະບຽນເຄື່ອງໝາຍການຄ້າ, ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ພ້ອມທັງບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ, ພາຍຫຼັງທີ່ສອດຄ່ອງຕາມເງື່ອນໄຂການໄດ້ຮັບໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 24 ການເຜີຍແຜ່ຜົນຂອງການຈົດທະບຽນເຄື່ອງໝາຍການຄ້າ**

ພາຍຫຼັງການຈົດທະບຽນເຄື່ອງໝາຍການຄ້າແລ້ວ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດສະເໜີຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອດັດແກ້ຂໍ້ຜິດພາດ ແລະ ເຜີຍແຜ່ຂໍ້ມູນທີ່ຖືກຕ້ອງຄືນໃໝ່ ພາຍໃນ ຫົກສິບ ວັນນັບແຕ່ວັນເຜີຍແຜ່ຄັ້ງທຳອິດ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ.

## ໝວດທີ 3
## ການດຳເນີນການ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ

**ມາດຕາ 25 ການດຳເນີນການ ຫຼັງການຈົດທະບຽນເຄື່ອງໝາຍການຄ້າ**

ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອປ່ຽນແປງຂໍ້ມູນ ກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງເຄື່ອງໝາຍການຄ້າ ຫຼື ຜູ້ຕາງໜ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 26 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ**

ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ເພື່ອນຳໃຊ້ເປັນຫຼັກຖານ ໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນເຄື່ອງໝາຍການຄ້າ ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ ຫຼື ກໍລະນີ ການຕໍ່ອາຍຸ, ເສຍຫາຍ ຫຼື ຊອກບໍ່ເຫັນ ຕ້ອງຍື່ນຄຳຮ້ອງ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 27 ການດັດແກ້ພາຍຫຼັງການຈົດທະບຽນ**

ພາຍຫຼັງເຄື່ອງໝາຍການຄ້າໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ ສຳລັບບາງລາຍການໃນໝວດສິນຄ້າ ຫຼື ການບໍລິການ ຊຶ່ງສາມາດຂໍຫຼຸດໝວດສິນຄ້າ ຫຼື ການບໍລິການ, ຂໍສະຫງວນສິດຕໍ່ບາງອົງປະກອບຂອງເຄື່ອງໝາຍການຄ້າ, ຂໍດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ຫຼື ດັດແກ້

ຕົວຢ່າງຂອງເຄື່ອງໝາຍການຄ້າ ໂດຍຍື່ນຄຳຮ້ອງຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ, ການດັດແກ້ອະນຸຍາດໃຫ້ດັດແກ້ໄດ້ພຽງເລັກນ້ອຍເທົ່ານັ້ນ ແຕ່ບໍ່ປ່ຽນແປງລັກສະນະຕົ້ນຕໍຂອງເຄື່ອງໝາຍ.

ກໍລະນີ ການດັດແກ້ໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າທີ່ມີຂໍ້ຜິດພາດ ທີ່ເກີດຈາກກົມຊັບສິນທາງປັນຍາ, ຜູ້ຮ້ອງຂໍຈະບໍ່ໄດ້ຈ່າຍຄ່າບໍລິການ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 28 ການຍົກເລີກ ຫຼື ລຶບລ້າງ ເຄື່ອງໝາຍການຄ້າ ອີງຕາມຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ເຮັດໃຫ້ເຂົ້າໃຈຜິດ**

ຖ້າຫາກກົມຊັບສິນທາງປັນຍາ ເຫັນວ່າເຄື່ອງໝາຍການຄ້າ ທີ່ໄດ້ອອກໃບຢັ້ງຢືນການຈົດທະບຽນໄປແລ້ວນັ້ນ ມີຂໍ້ມູນທີ່ບໍ່ຖືກຕ້ອງ, ຂໍ້ມູນບິດເບືອນ ຫຼື ແອບອ້າງຄວາມເປັນເຈົ້າຂອງແທ້ຈິງ ຢູ່ໃນສຳນວນຄຳຮ້ອງ, ປິດບັງຂໍ້ມູນ, ການກະທຳໃດໜຶ່ງທີ່ລະເມີດ ຫຼື ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ຖ້າຂໍ້ມູນດັ່ງກ່າວມີມູນຄວາມຈິງ ກົມຊັບສິນທາງປັນຍາ ຕ້ອງດຳເນີນການຍົກເລີກທາງດ້ານບໍລິຫານ ແລະ ຕ້ອງແຈ້ງການໃຫ້ເຈົ້າຂອງເຄື່ອງໝາຍການຄ້າຮັບຊາບ.

ຖ້າວ່າເຈົ້າຂອງເຄື່ອງໝາຍການຄ້າ ບໍ່ເຫັນດີຕໍ່ກັບແຈ້ງການ, ສາມາດສະເໜີຂໍພິຈາລະນາທາງດ້ານບໍລິຫານຢູ່ກົມຊັບສິນທາງປັນຍາ ຫຼື ສານປະຊາຊົນ.

**ມາດຕາ 29 ອາຍຸການປົກປ້ອງ**

ເຄື່ອງໝາຍການຄ້າ ມີອາຍຸການປົກປ້ອງ ສິບປີ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ. ຖ້າຫາກເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນ ທີ່ລະບຸວັນທີຈົດທະບຽນກ່ອນໜ້ານີ້, ໃຫ້ຖືວ່າເຄື່ອງໝາຍການຄ້າ ມີອາຍຸການປົກປ້ອງສິບປີ ນັບແຕ່ວັນທີຈົດທະບຽນເປັນຕົ້ນໄປ.

ອາຍຸການປົກປ້ອງ ເຄື່ອງໝາຍການຄ້າ ສາມາດຕໍ່ໄດ້ເທື່ອລະ ສິບປີ ໂດຍຍື່ນຄຳຮ້ອງຂໍຕໍ່ອາຍຸ ພາຍໃນຫົກ ເດືອນ ກ່ອນວັນສິ້ນສຸດອາຍຸການປົກປ້ອງ ຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.

ກໍລະນີ ການປົກປ້ອງເຄື່ອງໝາຍການຄ້າ ຫາກໝົດອາຍຸ ແຕ່ຍັງບໍ່ທັນໄດ້ຍື່ນຄຳຮ້ອງຂໍຕໍ່ອາຍຸ, ຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ສາມາດຍື່ນຄຳຮ້ອງຂໍຕໍ່ອາຍຸການຈົດທະບຽນໄດ້ ແຕ່ຕ້ອງຍື່ນພາຍໃນຫົກ ເດືອນ ນັບແຕ່ວັນສິ້ນສຸດອາຍຸການປົກປ້ອງ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບການຮັກສາອາຍຸການປົກປ້ອງ ແຕ່ຕ້ອງໄດ້ຈ່າຍຄ່າປັບໃໝສຳລັບຄວາມລ່າຊ້າ.

ກໍລະນີ ມື້ສຸດທ້າຍຂອງອາຍຸການປົກປ້ອງເຄື່ອງໝາຍການຄ້າ ຫາກເປັນວັນພັກທາງລັດຖະການ ຫຼື ເປັນວັນທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບໍ່ເປີດຮັບຄຳຮ້ອງ, ວັນທີຮັບຄຳຮ້ອງຕ້ອງຕໍ່ເວລາອອກໄປຈົນເຖິງ ວັນລັດຖະການທຳອິດຕໍ່ໄປ.

ສຳລັບການຍື່ນຄຳຮ້ອງຕໍ່ອາຍຸການປົກປ້ອງຜ່ານຊ່ອງທາງເອເລັກໂຕຣນິກ ສາມາດຍື່ນໄດ້ທຸກວັນເວລາ ບໍ່ເວັ້ນວັນພັກລັດຖະການ.

ໃນກໍລະນີ ການຕໍ່ອາຍຸປົກປ້ອງເຄື່ອງໝາຍການຄ້າ ທີ່ບໍ່ໄດ້ມີການລະບຸລາຍການສິນຄ້າ ຫຼື ການບໍລິການລະອຽດມາກ່ອນ, ຜູ້ຍື່ນຄຳຮ້ອງຂໍຕໍ່ອາຍຸປົກປ້ອງເຄື່ອງໝາຍການຄ້າ ຕ້ອງລະບຸລາຍການສິນຄ້າ ແລະ ການບໍລິການ ຢ່າງຈະແຈ້ງ.

**ມາດຕາ 30 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ສາມາດໂອນສິດຂອງຕົນບາງສ່ວນ ຫຼື ທັງໝົດ ໂດຍເຮັດເປັນລາຍລັກອັກສອນ ເຊັ່ນ: ການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ກໍລະນີ ມີການໂອນສິດຕໍ່ເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງກ່ຽວກັບການໂອນສິດ ຕາມແບບພິມຂອງກົມຊັບສິນທາງປັນຍາ ຜ່ານພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຊາບ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຮັບຮູ້ກ່ຽວກັບການໂອນສິດ ເປັນລາຍລັກອັກສອນ ໃຫ້ແກ່ຜູ້ຮັບໂອນສິດ, ບັນທຶກການໂອນສິດເຂົ້າໃນລະບົບຖານຂໍ້ມູນທາງຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ. ຖ້າຜູ້ທີ່ໄດ້ຮັບໂອນສິດຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສົ່ງສຳເນົາແຈ້ງຮັບຮູ້ ກ່ຽວກັບການໂອນສິດດັ່ງກ່າວ ໃຫ້ຜູ້ໂອນສິດຮັບຮູ້.

ໃນກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນທີ່ກ່ຽວຂ້ອງກັບເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດ.

ກໍລະນີ ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ໃຫ້ຖືວ່າ ລວມເອົາການໂອນເຄື່ອງໝາຍການຄ້າ ຂອງນິຕິບຸກຄົນດັ່ງກ່າວນັ້ນ.

ຖ້າຫາກຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໄສ, ກົມຊັບສິນທາງປັນຍາ ສາມາດແຈ້ງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອໃຫ້ບຸກຄົນທີ່ແຈ້ງການໂອນສິດນັ້ນ ຍື່ນຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

ຖ້າມີການໂອນສິດນຳໃຊ້ເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ເຈົ້າຂອງສິດຕ້ອງໄດ້ແຈ້ງຢູ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອສົ່ງຕໍ່ໃຫ້ກົມຊັບສິນທາງປັນຍາ ບັນທຶກໄວ້ໃນຖານຂໍ້ມູນຊັບສິນທາງປັນຍາ, ຖ້າບໍ່ດັ່ງນັ້ນຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ.

### ມາດຕາ 31 ການອະນຸຍາດນຳໃຊ້

ເຈົ້າຂອງສິດຕໍ່ເຄື່ອງໝາຍການຄ້າ ສາມາດອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ເຄື່ອງໝາຍການຄ້າຂອງຕົນບາງສ່ວນ ຫຼື ທັງໝົດ ເພື່ອສະແຫວງຫາຜົນປະໂຫຍດຈາກສິດ ຊຶ່ງສາມາດດຳເນີນໂດຍການເຮັດສັນຍາການອະນຸຍາດນຳໃຊ້ ແຕ່ບໍ່ຖືເປັນການໂອນກຳມະສິດເຄື່ອງໝາຍການຄ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂໍ້ທີ 2 ແລະ ຂໍ້ທີ 4 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ອະນຸຍາດນຳໃຊ້ ຫຼື ຜູ້ໄດ້ຮັບອະນຸຍາດນຳໃຊ້ ຕ້ອງແຈ້ງຜ່ານພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອສົ່ງຕໍ່ກົມຊັບສິນທາງປັນຍາຊາບ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນມາດຕາ 30 ຂອງຂໍ້ຕົກລົງສະບັບນີ້.

ຖ້າມີການໂອນກຳມະສິດຂອງນິຕິບຸກຄົນທີ່ໄດ້ຮັບການອະນຸຍາດນຳໃຊ້ເຄື່ອງໝາຍການຄ້າ, ເຄື່ອງໝາຍຮັບຮອງ ຫຼື ເຄື່ອງໝາຍລວມໝູ່ ໃຫ້ຖືວ່າການອະນຸຍາດນຳໃຊ້ດັ່ງກ່າວ ຖືກໂອນພ້ອມກັບການໂອນກຳມະສິດຂອງນິຕິບຸກຄົນນັ້ນ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ ຢູ່ໃນສັນຍາການອະນຸຍາດນຳໃຊ້ ຫຼື ໃນເອກະສານການໂອນກຳມະສິດ.

ກໍລະນີ ທີ່ມີການໂອນກຳມະສິດຂອງນິຕິບຸກຄົນທີ່ໄດ້ຮັບການອະນຸຍາດນຳໃຊ້ເຄື່ອງໝາຍການຄ້າດັ່ງກ່າວ ສັນຍາການອະນຸຍາດນຳໃຊ້ເຄື່ອງໝາຍການຄ້າໃຫ້ແກ່ບຸກຄົນອື່ນ ຈະບໍ່ຖືວ່າເປັນໂມຄະ ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນໃນສັນຍາການອະນຸຍາດນຳໃຊ້.

### ມາດຕາ 32 ການສ້າງສຳນວນເອກະສານຂຶ້ນໃໝ່

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳເນົາ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານອື່ນໆທີ່ເສຍຫາຍ ຫຼື ສູນຫາຍນັ້ນຂຶ້ນມາໃໝ່.

## ໝວດທີ 4
## ການເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ

**ມາດຕາ 33 ການເປັນຜູ້ຕາງໜ້າໃນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າໃນການດຳເນີນການຈົດທະບຽນເຄື່ອງໝາຍການຄ້າ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ບຸກຄົນໃດໜຶ່ງທີ່ ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ຈາກເຈົ້າຂອງເຄື່ອງໝາຍການຄ້າ;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ຢູ່ ສປປ ລາວ;
3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ພະນັກງານ ຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ຜູ້ມອບສິດ. ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ບໍ່ສອດຄ່ອງກັບກົດໝາຍ ຫຼື ລະບຽບການ.

**ມາດຕາ 34 ການມອບສິດໃຫ້ເປັນຜູ້ຕາງໜ້າ**

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດ ດັ່ງນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍ ໃຫ້ດຳເນີນການໃດໜຶ່ງທີ່ກ່ຽວຂ້ອງຢູ່ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ກົມຊັບສິນທາງປັນຍາ;
3. ໄລຍະເວລາ.

ກໍລະນີມີການປ່ຽນຜູ້ຕາງໜ້າ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ເປັນລາຍລັກອັກສອນ ຕາມແບບພິມທີ່ໄດ້ກຳນົດໄວ້.

ກໍລະນີ ໃບມອບສິດບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນ ທີ່ກ່ຽວຂ້ອງກັບໃບມອບສິດ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນ ຫາກສຳເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຖ້າຫາກຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນ ໂດຍຜູ້ມີສິດອຳນາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານເຄື່ອງໝາຍການຄ້າ

**ມາດຕາ 35 ການຈັດຕັ້ງປະຕິບັດວຽກງານເຄື່ອງໝາຍການຄ້າ**

ການຈັດຕັ້ງປະຕິບັດວຽກງານເຄື່ອງໝາຍການຄ້າ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແບ່ງອອກ ສອງ ຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານເຄື່ອງໝາຍການຄ້າ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານເຄື່ອງໝາຍການຄ້າ;

3. ພິຈາລະນາສຳນວນຄຳຮ້ອງຂໍຈົດທະບຽນ, ຕໍ່ອາຍຸ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ ແລະ ການສະເໜີອື່ນໆ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

4. ບັນທຶກ, ເຜີຍແຜ່ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບເຄື່ອງໝາຍການຄ້າ;

5. ອອກໃບຢັ້ງຢືນຈົດທະບຽນເຄື່ອງໝາຍການຄ້າ, ແຈ້ງປະຕິເສດ, ຍົກເລີກ ຫຼື ລົບລ້າງ ແລະ ອື່ນໆ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

6. ໃຫ້ບໍລິການ ການກວດຄົ້ນເຄື່ອງໝາຍການຄ້າໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;

7. ຄົ້ນຄວ້າ ແລະ ພິຈາລະນາ ຄຳຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

8. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

9. ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ກ່ຽວກັບວຽກງານເຄື່ອງໝາຍການຄ້າ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານເຄື່ອງໝາຍການຄ້າ;

2. ໃຫ້ຄຳປຶກສາ ແລະ ຢັ້ງຢືນການຈັດໝວດສິນຄ້າ ຫຼື ການບໍລິການ ກໍລະນີ ຜູ້ຍື່ນຄຳຮ້ອງລະບຸລາຍການສິນຄ້າ ຫຼື ການບໍລິການ;

3. ຮັບຄຳຮ້ອງ ແລະ ຄຳສະເໜີອື່ນ ກ່ຽວກັບວຽກງານເຄື່ອງໝາຍການຄ້າ, ກວດຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຕາມເງື່ອນໄຂຕ່ຳສຸດ;

4. ຮັບຄຳຮ້ອງ ແລະ ດຳເນີນການກວດຄົ້ນເຄື່ອງໝາຍການຄ້າ ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ;

5. ນຳສົ່ງສຳນວນຄຳຮ້ອງຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ຄ່າທຳນຽມ ແລະ ຄ່າບໍລິການໃຫ້ກົມຊັບສິນທາງປັນຍາ;

6. ນຳສົ່ງໃບຢັ້ງຢືນຈົດທະບຽນເຄື່ອງໝາຍການຄ້າ, ຕໍ່ອາຍຸ ຫຼື ເອກະສານອື່ນໆ ທີ່ຕິດພັນກັບການຈົດທະບຽນເຄື່ອງໝາຍການຄ້າ ໃຫ້ຜູ້ຍື່ນຄຳຮ້ອງ;

7. ມອບໝາຍຄວາມຮັບຜິດຊອບໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;

8. ຊຸກຍູ້ ແລະ ສົ່ງເສີມ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

9. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານເຄື່ອງໝາຍການຄ້າ;

10. ສະຫຼຸບລາຍງານການຈັດຕັ້ງປະຕິບັດ ກ່ຽວກັບວຽກງານເຄື່ອງໝາຍການຄ້າ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງ ລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍເຄື່ອງໝາຍການຄ້າ, ສະບັບເລກທີ 0436/ອຄ, ລົງ ວັນທີ 30 ມີນາ 2023.

**ລັດຖະມົນຕີ**

ນ. ຈັນສຸກ ແສງພະຈັນ